# ທະນາຄານແຫ່ງ ສປປ ລາວ ເຊື່ອມຊຶມມູນເຊື້ອ
# ອັນສະຫງ່າອົງອາດຂອງກອງທັບປະຊາຊົນລາວວິລະຊົນ





ໃນຕອນແລງຂອງ 27 ມັງກອນ ຜ່ານມານີ້, ທີ່ຫ້ອງປະຊຸມໃຫຍ່ທະນາຄານແຫ່ງ ສປປ ລາວ ຄະນະພັກ-ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ຈັດພິທີທວນຄືນມູນເຊື້ອອັນສະຫງ່າອົງອາດຂອງກອງທັບປະຊາຊົນລາວວິລະຊົນບົນເສັ້ນທາງແຫ່ງການກ້າວເດີນ 63 ປີ ໂດຍພາຍໃຕ້ການໃຫ້ກຽດເຜີຍແຜ່ຂອງສະຫາຍ ສົມພາວ ໄຟສິດ ເລຂາຄະນະພັກ-ຜູ້ວ່າການທະນາຄານແຫ່ງ ສປປ ລາວ, ພ້ອມນີ້ກໍມີສະຫາຍຄະນະປະຈໍາພັກ-ບັນດາຄະນະພັກ-ຄະນະຜູ້ວ່າການ, ບັນດາສະຫາຍຄະນະພັກຮາກຖານ-ໜ່ວຍພັກ, ຄະນະອໍານວຍການທະນາຄານທຸລະກິດ, ບັນດາພະນັກງານຫຼັກແຫ່ງ-ອາວຸໂສເຂົ້າຮ່ວມຢ່າງຄົບຖ້ວນ.

ໃນການເຜີຍແຜ່ວັນມູນເຊື້ອຂອງກອງທັບໃນຄັ້ງນີ້, ສະຫາຍ ສົມພາວ ໄຟສິດ ເລຂາຄະນະພັກທະນາຄານແຫ່ງ ສປປ ລາວ ກໍໄດ້ຍົກໃຫ້ເຫັນເຖິງການກໍາເນີດ ແລະ ການເຄື່ອນໄຫວກໍ່ສ້າງ-ປັບປຸງ ແລະ ສູ້ຮົບມີໄຊຂອງກອງທັບປະຊາຊົນລາວໃນແຕ່ລະໄລຍະ ເຊິ່ງກອງທັບໄດ້ຮັບການສ້າງຕັ້ງຂຶ້ນຢ່າງເປັນທາງການໃນວັນທີ 20 ມັງກອນ 1949 ທີ່ເຂດລາວຮຸ່ງ-ພຽງສາ ເມືອງຊຽງຄໍ້ ແຂວງຫົວພັນ ໂດຍການປະກາດສ້າງຕັ້ງ ແລະຊີ້ນໍາ-ບັນຊາໂດຍກົງຂອງທ່ານ ໄກສອນ ພົມວິຫານ ລູກຜູ້ປະເສີດຂອງປະຊາຊົນ.

ຜ່ານຂະບວນວິວັດແຫ່ງການເຝິກຝົນຫຼໍ່ຫຼອມບົນແປວໄຟສູ້ຮົບໂດຍພາຍໃຕ້ການຊີ້ນໍາໆພາເດັດຂາດໂດຍກົງແລະຮອບດ້ານຂອງພັກປະຊາຊົນປະຕິວັດລາວ,ກອງທັບປະຊາຊົນລາວເຊິ່ງຍາມໃດກໍໄດ້ຮັບການສະໜັບສະໜູນ,ເປັນໃຈແລະໃຫ້ການຊ່ວຍເຫຼືອອັນລໍ້າຄ່າຈາກປະຊາຊົນລາວບັນດາເຜົ່າ,ຈາກບັນດາປະເທດເພື່ອນມິດໂດຍສະເພາະແມ່ນຈາກການນໍາຂອງພັກ,ລັດ,ກອງທັບແລະປະຊາຊົນຫວຽດນາມອ້າຍນ້ອງ ຍິ່ງຕີກໍ່ຍິ່ງໄດ້ຮັບໄຊຊະນະ ຈາກໄຊຊະນະນີ້ສູ່ໄຊຊະນະໃໝ່ໃຫຍ່ຫຼວງກວ່າເກົ່າ ສາມາດຕີຊະນະພວກລ່າເມືອງຂຶ້ນແບບເກົ່າ ແລະແບບໃໝ່ ແລະ ສາມາດສໍາເລັດໜ້າທີ່ການເມືອງຂອງຕົນໃນພາລະກິດປະຕິວັດຊາດ ປະຊາທິປະໄຕ,ສະຖາປະນາສປປລາວຢ່າງສະຫງ່າຜ່າເຜີຍໃນວັນທີ2 ທັນວາ1975.

ຢືນຢູ່ຕໍ່ໜ້າສະພາບການໃໝ່ ເຊິ່ງຢູ່ໃນການຈັດຕັ້ງປະຕິບັດສອງໜ້າທີ່ຍຸດທະສາດ ແລະ ການປ່ຽນແປງໃໝ່ຮອບດ້ານຢ່າງມີຫຼັກການຂອງພັກ,ກອງທັບປະຊາຊົນລາວໄດ້ສືບຕໍ່ເສີມຂະຫຍາຍມູນເຊື້ອອັນອົງອາດກ້າແກ່ນ ແລະ ເດັດຂາດບໍ່ຍອມຈໍານົນ, ມີຄວາມຈົງຮັກພັກດີຕໍ່ພັກ, ສາມາດຂັບໄລ່ພວກລູກແຫຼ້ງຕົນມີທີ່ຝືນປະຕິວັດໄດ້ຢ່າງຮາບຄາບ, ຜົນງານອັນໂດດເດັ່ນກໍ່ແມ່ນສາມາດປົກປັກຮັກສາອໍານາດອະທິປະໄຕແລະຜືນແຜ່ນດິນອັນຄົບຖ້ວນຂອງຊາດໄວ້ຢ່າງໝັ້ນຄົງ ໂດຍສະເພາະແມ່ນການທັບມ້າງກົນອຸບາຍແລະສະກັດກັ້ນ ການເຄື່ອນໄຫວສ້າງຄວາມວຸ້ນວາຍຂອງບັນດາອິດທິປໍລະປັກປະຕິການ ທີ່ຫວັງບຽດຍຶດຕາມຊາຍແດນທິດຕາເວັນຕົກຢູ່ສາມບ້ານເຂດເມືອງປາກລາຍ (ເມືອງທົ່ງມີໄຊ ປະຈຸບັນ) ໃນປີ 1984 ແລະ ເຂດຕາແສງນາບໍ່ນ້ອຍ ເມືອງບໍ່ແຕນ ແຂວງໄຊຍະບູລີ ໃນທ້າຍປີ 1987-1988 ແລະ ບັ້ນຮົບເລີກຊີ້-ກວດລ້າງພວກສັດຕູທີ່ເລັດລອດເຂົ້າມາກໍ່ຄວາມບໍ່ສະຫງົບຢູ່ພາກໃຕ້ຂອງລາວ ໃນປີ 1987.

ຍ້ອນຜົນງານຄືດັ່ງກ່າວກອງທັບປະຊາຊົນລາວຈຶ່ງມີຫຼາຍກົມກອງ ແລະ ບຸກຄົນ ໄດ້ກາຍເປັນວິລະຊົນ ແລະ ນັກຮົບແຂ່ງຂັນ, ນອກນີ້ກໍ່ມີບັນດາແຂວງ-ເມືອງ-ບ້ານເປັນວິລະຊົນ, ປະທານ ໄກສອນ ພົມວິຫານເວົ້າວ່າ: ເວລາໃນກອງທັບກໍ່ນໍາໜ້າທຸກວຽກງານ ເດັດດ່ຽວໜຽວແໜ້ນຜ່ານຜ່າອຸປະສັກ ສໍາເລັດທຸກໜ້າທີ່ຕີຊະນະສັດຕູທຸກໂຕ ສົມແລ້ວເປັນກໍາລັງແກ່ນສານທີ່ເຂັ້ມແຂງຂອງການປະຕິວັດ,ເປັນເຄື່ອງມືອັນແຫຼມຄົມຂອງພັກ.

ໃນວັນດຽວກັນນັ້ນທະນາຄານແຫ່ງ ສປປ ລາວ ກໍໄດ້ມີການປະດັບຫຼຽນໄຊໃຫ້ແກ່ກົມກອງ ແລະບຸກຄົນທີ່ມີຜົນງານໃນການປະກອບເຂົ້າໃນໜ້າທີ່ວຽກງານ ໂດຍສະເພາະກໍແມ່ນຍ້ອງຍໍ ແລະ ປະດັບຫຼຽນໄຊ ເນື່ອງໃນວັນສະເຫຼີມສະຫຼອງນະຄອນຫຼວງວຽງຈັນຄົບຮອບ 450 ປີ ໂດຍທະນາຄານແຫ່ງ ສປປ ລາວ ໄດ້ຮັບການປະດັບຫຼຽນໄຊແຮງງານຊັ້ນ III ແລະ ທ່ານ ບຸນສົງ ສົມມາລາວົງ ຮອງຜູ້ວ່າການທະນາຄານແຫ່ງ ສປປລາວ ໄດ້ຮັບການປະດັບຫຼຽນໄຊແຮງງານຊັ້ນ I ໂດຍການໃຫ້ກຽດປະດັບຂອງສະຫາຍ ສົມພາວ ໄຟສິດ ເລຂາຄະນະພັກ-ຜູ້ວ່າການທະນາຄານແຫ່ງ ສປປ ລາວ ແລະ ໃນເວລາຕໍ່ມາສະຫາຍ ຄໍາວົງ ທິບພະວົງ ຄະນະປະຈໍາພັກ, ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ຂຶ້ນອ່ານດໍາລັດຂອງນາຍົກລັດຖະມົນຕີວ່າດ້ວຍການອະນຸມັດໃຫ້ພະນັກງານການນໍາຂອງທະນາຄານແຫ່ງ ສປປ ລາວ ອອກພັກຜ່ອນບໍານານ 1 ທ່ານຄື:ທ່ານ ບຸນສົງ ສົມມາລາວົງ ຈາກນັ້ນພິທີກໍ່ໄດ້ມີການມອບຂອງຂວັນ ແລະ ກະຕ່າດອກໄມ້ສົດ ໃຫ້ອະດີດການນໍາຂັ້ນສູງຂອງທະນາຄານແຫ່ງ ສປປ ລາວ ທີ່ມີຜົນງານອັນຫຼວງຫຼາຍເຂົ້າໃນການກໍ່ສ້າງ-ພັດທະນາລະບົບທະນາຄານໃຫ້ດີຂຶ້ນເປັນກ້າວໆ.